ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສູນກາງສະຫະພັນກຳມະບານລາວ

ຫ້ອງການ

ເລກທີ 387 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 27 ກຸມພາ 2025

# ໜັງສືແຈ້ງເຊີນປະມູນ

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສູນກາງສະຫະພັນກຳມະບານລາວ ເລກທີ 93/ຄລສພ, ວັນທີ 12/04/2022.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການສ້ອມແປງອາຄານສຳນັກງານສູນກາງສະຫະພັນກຳມະບານລາວ ສະບັບເລກທີ 277/ສກລ, ລົງວັນທີ 18 ກຸມພາ 2025.

1. ຫ້ອງການ ສູນກາງສະຫະພັນກຳທະບານລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນ ສຳລັບໂຄງການສ້ອມແປງອາຄານສຳນັກງານສູນກາງສະຫະພັນກຳມະບານລາວ. ກຳນົດໄລຍະເວລາການສ້ອມແປງໃຫ້ສຳເລັດ 12 ເດືອນ.
2. ການປະມູນດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ຫ້ອງການ ສູນກາງສະຫະພັນກຳທະບານລາວ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຍື່ນຊອງປະມູນສຳລັບໂຄງການສ້ອມແປງອາຄານສຳນັກງານສູນກາງສະຫະພັນກຳມະບານລາວ.
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈຳນົງຊື້ເອກະສານປະມູນໄດ້ທີ່ພະແນກແຜນການ ແລະ ການເງິນ, ຫ້ອງການ ສູນກາງສະຫະພັນກຳມະບານລາວ, ໂທລະສັບ 020 54939994, 020 98797826 (ໃນໂມງລັດຖະການ), ເລີ່ມຂາຍຊອງປະມູນໃນວັນທີ 27 ກຸມພາ 2025 ຫາ 02 ເມສາ 2025, ໃນລາຄາ 3,000,000 ກີບ/ຊອງ ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງ ກ່ອນເວລາ 09:00ໂມງ ຂອງວັນທີ 02 ເມສາ 2025 ທີ່ຫ້ອງປະຊຸມນ້ອຍ ຊັ້ນ 04 ຕຶກສຳນັກງານສູນກາງສະຫະພັນກຳມະບານາວ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:00ໂມງ ຂອງວັນທີ 02 ເມສາ 2025 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ໄດ້ກຳນົດ;
6. ທຸກໆຊອງປະມູນຕ້ອງໄດ້ມີການຄ້ຳປະກັນການປະມູນດ້ວຍເງິນສົດ, ແຊັກ (ວິຊາ), ໜັງສືຄ້ຳປະກັນອອກໂດຍທະນາຄານ, ບໍ່ໃຫ້ຫຼຸດ 2% ຂອງມູນຄ່າສະເໜີ.

ຫົວໜ້າຫ້ອງການ

ບຸນຈັນ ໃຈອີສານ